# ແບບຟອມລາຍງານຜົນການຕິດຕາມກວດກາການຈັດຕັ້ງປະຕິບັດແຜນການຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ໂຄງການລົງທຶນ ສຳລັບ ໂຄງການຂຸດຄົ້ນຖ່ານຫີນ ເຂດບ້ານວັງຄີ, ເມືອງຫີນເຫີບ, ແຂວງວຽງຈັນ ຂອງບໍລິສັດ ເຟີສປາຊີຟິກ ມາຍນິ້ງ ຈຳກັດ

## I. ຂໍ້ມູນກ່ຽວກັບໂຄງການ

- ຊື່ໂຄງການ:...............**ໂຄງການຂຸດຄົ້ນຖ່ານຫີນ**.....................................................................
- ຊື່ເຈົ້າຂອງໂຄງການ:.....**ບໍລິສັດ ເຟີສປາຊີຟິກ ມາຍນິ້ງ ຈຳກັດ**...............................................................
- ປະເພດໂຄງການ:...............**IEE**.........................................................................................
- ທີ່ຕັ້ງໂຄງການ:.......**ເຂດບ້ານວັງຄີ, ເມືອງຫີນເຫີບ, ແຂວງວຽງຈັນ**...................................................
- ຂະແໜງການ:...................**ບໍ່ແຮ່**.........................................................................................
- ໄລຍະສຳປະທານ:..............**17 ປີ**........................................................................................
- ກຳລັງການຜະລິດ:............**100,000ໂຕນ/ປີ**...........................................................................
- ເນື້ອທີ່ສຳປະທານໂຄງການ:................**20 ກມ$^2$**.................................................................
- ສະຖານະພາບໂຄງການ (IEE/EIA):........**ໄລຍະການຂຸດຄົ້ນ**.......................................................
- ໃບຢັ້ງຢືນຮັບຮອງ ( IEE/EIA):.................. **IEE**.................................................................

  ລົງວັນທີ, ເລກທີ:............ **801/ອວຕສ.ສນຍ, ລົງວັນທີ 13 ເມສາ2006**..............................

## II. ຄະນະຕິດຕາມກວດກາ

- ວັນທີລົງຕິດຕາມກວດກາ:......**3-6/04/2017**.......................................................................
- ປະເພດການຕິດຕາມກວດກາ:.....**ປົກກະຕິ**...........................................................................
- ຄະນະຕິດຕາມກວດກາ:.........**ທີມງານ ກປສສ, ກຊສ; ກົມບໍ່ແຮ່, ກະຊວງພະລັງງານ ແລະ ບໍ່ແຮ່; ກະຊວງ ແຜນການ ແລະ ການລົງທຶນ, ພະແນກ ຊສ ແຂວງວຽງຈັນ; ຫ້ອງການ ຊສ ເມືອງ ຫີນເຫີບ**.........................
- ບົດບັນທຶກລົງຕິດຕາມກວດກາ:............**ຢູ່ໃນເອກະສານຄັດຕິດ 1**...................................................
- ລາຍຊື່ຄະນະລົງຕິດຕາມກວດກາ:..........**ຢູ່ໃນເອກະສານຄັດຕິດ 2**..................................................

## III. ຈຸດປະສົງຂອງການກວດກາ ແລະ ບັນຫາທີ່ເອົາໃຈໃສ່

- ເພື່ອຕິດຕາມກວດກາການຈັດຕັ້ງປະຕິບັດມາດຕະການປ້ອງກັນ ແລະ ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດຕາມ ທີ່ກຳນົດໄວ້ໃນບົດລາຍງານການສຶກສາເບື້ອງຕົ້ນ ກ່ຽວກັບ ສິ່ງແວດລ້ອມ;
- ເງື່ອນໄຂ ແລະ ພັນທະທີ່ກຳນົດໃນໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມ.

## IV. ສະພາບການຈັດຕັ້ງປະຕິບັດໂຄງການມາເຖິງປະຈຸບັນ

ບໍລິສັດ ເຟີສປາຊີຟິກມາຍນິ້ງ ຈຳກັດ ໄດ້ເຊັນສັນຍາກັບລັດຖະບານ ສປປ ລາວ ວ່າດ້ວຍ ການຂຸດຄົ້ນ ແລະ ຜະລິດແຮ່ຖ່ານຫີນ ໃນປີ 2007 ໃນເນື້ອທີ່ສຳປະທານ 20ກິໂລຕາແມັດ ເຂດບ້ານວັງຄີ, ເມືອງຫີນເຫີບ, ແຂວງວຽງຈັນ ,ມີໄລຍະສຳປະທານ 17 ປີ .ປະຈຸບັນ ບໍລິສັດ ໄດ້ດຳເນີນການຂຸດຄົ້ນແຮ່ ທັງໝົດ ມີ 3 ເຂດ ເຊິ່ງຈະຍັງສືບຕໍ່ການຂຸດຄົ້ນຢູ່. ໂຄງການມີກຳລັງການຂຸດຄົ້ນ 100,000 ໂຕນຕໍ່ປີ, ແຕ່ການຈຳໜ່າຍໄດ້ພຽງແຕ່ 20,000 ໂຕນຕໍ່ປີ. ປະຈຸບັນຍັງປະເຊີນບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ ເນື່ອງຈາກວ່າກຳລັງການຜະລິດປະຕິບັດໄດ້ຕາມແຜນການ, ແຕ່ການຈຳໜ່າຍຍັງບໍ່ໄດ້ດີເທົ່າຄວນ

## V. ບັນຫາທີ່ພົບເຫັນ

- **ສິ່ງເສດເຫຼືອ:..**ຍັງມີເສດນ້ຳມັນເຄື່ອງ ແລະ ກະຕຸກຊະຊາຍໃນເຂດໂຮງງານ;
- **ຄຸນນະພາບນ້ຳ**:ອ່າງເກັບນ້ຳເສດແຮ່ໃນເຂດໂຮງງານມີຈຳນວນ 3 ອ່າງ ທີ່ມີຂະໜາດນ້ອຍ ແລະ ຕ່ຳ ເຊິ່ງເຫັນວ່າ ບໍ່ພຽງພໍ ຕໍ່ການຮອງຮັບນ້ຳເສຍຈາກກອງເສດແຮ່ ແລະ ອາດມີຄວາມສ່ຽງນ້ຳລົ້ນອອກສູ່ເຂດຜະລິດຂອງປະຊາຊົນ ໂດຍສະເພາະໃນລະດູຝົນ;
- **ສຸຂະພາບ ແລະ ຄວາມປອດໄພ**:
  - ກອງດິນເຟືອຍແມ່ນມີປະລິມານຫຼາຍ ແລະ ສູງຈົນເກີນໄປ;
  - ປ້າຍເຕືອນ ແລະ ປ້າຍຫ້າມ ໃນບາງເຂດທີ່ມີຄວາມສ່ຽງ ຍັງບໍ່ພຽງພໍເປັນຕົ້ນແມ່ນເຂດໜອງປາ ແລະ ເຂດຂຸດຄົ້ນ;
  - ພະນັກງານ-ກຳມະກອນ ຈຳນວນໜຶ່ງ ຍັງບໍ່ປະຕິບັດລະບຽບປ້ອງກັນຄວາມປອດໄພ ໃນເວລາເຮັດວຽກ;

- **ການເຊາະເຈື່ອນ**: ລານກອງແຮ່ ເຫັນວ່າ ຢູ່ໃນພື້ນທີ່ຕິດກັບດິນນາປະຊາຊົນ ບ້ານວັງຄີ ເຊິ່ງອາດວ່າມີດິນເຊາະເຈື່ອນ ໃສ່ພື້ນທີ່ທຳການຜະລິດ ຂອງປະຊາຊົນ.
- **ແລະ ອື່ນໆ**: ບໍ່ມີການລາຍງານຄວາມຄືບໜ້າ ກ່ຽວກັບການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງສິ່ງແວດລ້ອມ ໂຄງການໃຫ້ພາກສ່ວນທີ່ກ່ຽວຂ້ອງຮັບຊາບ.

## VI. <u>ສະເໜີແກ້ໄຂ</u>

- ອະທິບາຍການແກ້ໄຂບັນຫາໂດຍຫຍໍ້:..........................................................................................

1. ໃຫ້ບໍລິສັດ ສ້າງແຜນການຟື້ນຟູພື້ນທີ່ ທີ່ສຳເລັດການຂຸດຄົ້ນ ແລະ ສົ່ງໃຫ້ຂະແໜງການທີ່ກ່ຽວຂ້ອງພິຈາລະນາ ຮັບຮອງເອົາ;
2. ໃຫ້ບໍລິສັດ ຂຸດຄອງນ້ຳອ້ອມເຂດລານກອງແຮ່ ເພື່ອປ້ອງກັນບໍ່ໃຫ້ນ້ຳເສຍຈາກລານກອງແຮ່ ໄຫຼລົງສູ່ດິນນາ ຂອງປະຊາຊົນ ແລະ ເສີມຄັນຄູອ້ອມອ່າງເກັບນ້ຳເສດແຮ່ ເພີ່ມເຕີມ ໃນເຂດໂຮງງານໂມ້ແຮ່ ແລະ ປັບປຸງອ່າງ ເກັບນ້ຳເສດແຮ່ໃຫ້ເໝາະສົມ ແລະ ຕາມເຕັກນິກ ເພື່ອຮັບປະກັນບໍ່ໃຫ້ນ້ຳລົ້ນອອກ;
3. ໃຫ້ບໍລິສັດ ຈັດສັນບ່ອນຖິ້ມດິນເຟືອຍໃຫ້ເປັນລະບຽບ ຫຼີກລ້ຽງໃກ້ກັບເຂດສາຍນ້ຳທຳມະທຳມະຊາດ ແລະ ເຂດທຳການຜະລິດຂອງປະຊາຊົນ ພ້ອມທັງ ມີແຜນປູກຕົ້ນໄມ້ ເພື່ອປ້ອງກັນບໍ່ໃຫ້ດິນເຊາະເຈື່ອນ ລົງສູ່ສາຍ ທຳມະຊາດ;
4. ໃຫ້ບໍລິສັດ ມີວິທີການ ແລະ ມາດຕະການປ້ອງກັນ ນ້ຳມັນເຄື່ອງ ແລະ ສິ່ງເສດເຫຼືອ ໃຫ້ເປັນລະບົບ;
5. ໃຫ້ບໍລິສັດ ຕິດຕັ້ງປ້າຍເຕືອນ, ປ້າຍຫ້າມ ເພີ່ມເຕີມ ໃນພື້ນທີ່ທີ່ມີຄວາມສ່ຽງຂອບເຂດໂຄງການ ແລະ ເຂດ ຊຸມຊົນ ໃກ້ຄຽງ;
6. ໃຫ້ບໍລິສັດ ມີມາດຕະການເຂັ້ມງວດຕໍ່ພະນັກງານ-ກຳມະກອນ ທີ່ບໍ່ສວມໃສ່ອຸປະກອນປ້ອງກັນຄວາມປອດ ໄພໃນເວລາເຮັດວຽກ;
7. ສະເໜີບໍລິສັດ ຊ່ວຍອະນາໄມຄອງເໝືອງ ໃນເຂດຄອງລະບາຍນ້ຳໃກ້ອ່າງເກັບນ້ຳເສຍຈາກເສດແຮ່ ໃຫ້ສຳເລັດ ກ່ອນລະດູຝົນ ປີ 2017 ເພື່ອໃຫ້ປະຊາຊົນນຳໃຊ້ເຂົ້າໃນການຜະລິດ;
8. ໃຫ້ບໍລິສັດ ປັບປຸງແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຂອງ ໂຄງການ ແລ້ວນຳສົ່ງ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງວຽງຈັນ ເພື່ອພິຈາລະນາ ຮັບຮອງເອົາ;
9. ໃຫ້ບໍລິສັດ ສ້າງບົດລາຍງານ ຄວາມຄືບໜ້າການຈັດຕັ້ງປະຕິບັດມາດຕະການຫຼຸດຜ່ອນຜົນກະທົບຕໍ່ ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ສະເພາະທຸກໆ 3 ເດືອນ, 6 ເດືອນ ແລະ ປະຈຳປີ ສົ່ງໃຫ້ ກອງປະ ເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ, ພະແນກ ຊສ ແຂວງວຽງຈັນ ແລະ ຫ້ອງການ ຊສ ເມືອງຫີນ ເຫີບ ຮັບຊາບ ເປັນປົກກະຕິ.